# ການສຳປະທານ ແລະ ເຊົ່າ ໃນ ສ.ປ.ປ.ລາວ

## ການຈັດລຽງຂໍ້ມູນການລົງທຶນທີ່ດິນ

## - ບົດສະຫຼຸບຫຍໍ້ -





2012

## ບົດສັງລວມຫຍໍ້

ມີການພິຈາລະນາແລ້ວວ່າການລົງທຶນໃນທີ່ດິນເປັນບັນຫາພົວພັນຫຼາຍດ້ານບໍ່ວ່າຈະເປັນການປ່ຽນແປງທາງເສດຖະກິດ - ສັງຄົມ, ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ພັດທະນາເສດຖະກິດໃນ ສປປ ລາວ. ການເພີ່ມຄວາມຕ້ອງການວັດຖຸດິບຂອງປະເທດເພື່ອນບ້ານທີ່ມີເສດຖະກິດກຳລັງເຕີບໃຫຍ່ (ໂດຍສະເພາະແມ່ນ ປະເທດໄທ, ຫວຽດນາມ ແລະ ສ.ປ. ຈີນ) ແລະ ການສ້າງນະໂຍບາຍ ແລະ ລະບຽບການທີ່ເອື້ອອຳນວຍໃຫ້ການລົງທຶນທີ່ເອົາຊັບພະຍາກອນ ແລະ ທີ່ດິນເປັນປັດໄຈກະຕຸກຊຸກຍູ້ໄດ້ພາໃຫ້ເນື້ອທີ່ດິນທີ່ອະນຸຍາດສຳລັບການພັດທະນາເພີ່ມຂຶ້ນໄວວາ. ຈຳນວນຂອງສັນຍາທີ່ດິນເພີ່ມຂຶ້ນສູງໃນຊຸມປີຜ່ານມາ, ເພີ່ມຂຶ້ນຫ້າສິບເທົ່າຈາກປີ 2000 ຫາ 2009. ແຕ່ກໍ່ຍັງມີການຖົກຖຽງກັນໃນທາງສ້າງສັນກ່ຽວກັບຕົ້ນທຶນ, ຜົນປະໂຫຍດ ແລະ ທາງເລືອກທີ່ຍືນຍົງຕໍ່ການກ້າວກະໂດດດັ່ງກ່າວນີ້ວ່າເປັນຍ້ອນຂາດຂໍ້ມູນທີ່ເຊື່ອຖືໄດ້ ແລະ ຂໍ້ມູນທີ່ສົມບູນແບບ.

ຫຼາຍທັດສະນະເຫັນວ່າບັນຊີການສຳປະທານ ແລະ ການເຊົ່າ ທີ່ດິນລັດນຳສະເໜີ ຖານຂໍ້ມູນທີ່ບໍ່ຊ້ຳໃຜໃນໂລກ ແລະ ມີຄຸນຄ່າທີ່ສຸດ. ມັນປະກອບດ້ວຍຂໍ້ມູນລັກສະນະພູມສາດທີ່ຊັດເຈນ ທີ່ເກັບກຳ ພາຍໃຕ້ໂຄງການ NREIC-GIZ ໃນເມື່ອກ່ອນ, ແລະ ເປັນບັນຊີທີ່ລະບົບອັນທຳອິດທີ່ສາມາດເບິ່ງ ແລະ ວິເຄາະຂອບເຂດ ແລະ ມິຕິຕ່າງໆຂອງການລົງທຶນທີ່ດິນໃນພາບລວມທັງຫມົດປະເທດ. ຮອດປັດຈຸບັນນີ້, ຂໍ້ມູນລວງເລິກກ່ຽວກັບການຂະຫຍາຍຕົວຂອງການລົງທຶນທີ່ດິນໃນ ສ.ປ.ປ. ລາວ ທີ່ມີຢູ່ທັງໝົດອີງໃສ່ບົນພື້ນຖານຂອງການສັງລວມສະຖິຕິ ທາງການ ຫຼື ກໍລະນີສຶກສາສະເພາະບາງບ່ອນ ເປັນຜົນໃຫ້ບໍ່ມີຂໍ້ມູນ ການສຳປະທານ ແລະ ການເຊົ່າທີ່ດິນ ລາຍລະອຽດໃນລະດັບຊາດ. ຂໍ້ມູນໃນບັນຊີໄດ້ຖືກເກັບກຳຢູ່ໃນ ທ້ອງຖິ່ນ ແລະ ໃນບ່ອນທີ່ເຮັດໄດ້ຈະເກັບກຳໃນລັກສະນະພູມສາດທີ່ຊັດເຈນ ເພື່ອໃຫ້ສາມາດເຊື່ອມໂຍງຮວມກັນກັບຂໍ້ມູນ ລະດັບຊາດຊຸດອື່ນໆ ເພື່ອສ້າງຄວາມເຂົ້າໃຈເລິກເຊິ່ງກ່ຽວກັບຮູບແບບພາກພື້ນ ຕະຫຼອດຮອດ ກ່ຽວກັບຂົງເຂດທີ່ມີການ ສຳປະທານ ແລະ ການເຊົ່າເກີດຂຶ້ນ.

ນັບຕັ້ງແຕ່ເດືອນຕຸລາປີ 2011, ອົງການສະວິດເພື່ອການພັດທະນາແລະການຮ່ວມມື (SDC) ໄດ້ສະໜອງທຶນຊ່ວຍເຫຼືອໃຫ້ແກ່ສູນຂໍ້ມູນຂ່າວສານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (NREIC) ໃຫ້ດຳເນີນການເກັບກຳຂໍ້ມູນ ໃນຂົງເຂດທີ່ສົນໃຈນີ້. ທຶນຊ່ວຍເຫຼືອດັ່ງກ່າວນີ້ເຮັດແນວໃດ ໃຫ້ ສູນເພື່ອການພັດທະນາ ແລະ ສິ່ງແວດລ້ອມ (CDE) ຂອງມະຫາວິທະຍາໄລເບີນ ແລະ NREIC ສຸມໃສ່ຂໍ້ມູນທີ່ມີຢູ່ໃຫ້ກາຍຮູບອອກມາເປັນປຶ້ມຫົວນີ້. ປຶ້ມຫົວນີ້ນຳສະເໜີການວິເຄາະບັນຊີ, ຈັດໃຫ້ມີຊຸດ "ພາບຖ່າຍ" ເຊື່ອມໂຍງເຂົ້າກັບຂໍ້ມູນ, ພ້ອມກັບການຕີຄວາມໝາຍເພີ້ມເຕີມຂອງລັກສະນະສຳຄັນ ແລະ ທ່າອ່ຽງ.

## ການວິເຄາະ ແລະ ຜົນໄດ້ຮັບໂດຍລວມ

ປຶ້ມນີ້ສະເໜີຮູບພາບໂດຍລວມລະດັບຊາດ ຄັ້ງທຳອິດຂອງການ ສຳປະທານ ແລະ ເຊົ່າທີ່ດິນ ໃນ ສປປ ລາວ. ມັນຈຶ່ງຖືເປັນການສະໜອງຂໍ້ມູນສຳຄັນ ແລະ ໃຫ້ຄວາມເຂົ້າໃຈລວງເລິກໃນຫຼາຍປະເດັນ ສຳຄັນໆ, ການກະຈາຍດ້ານທີ່ຕັ້ງພູມສາດຂອງສັນຍາທີ່ດິນ ແລະ ຂະໜາດຂອງການລົງທຶນທີ່ເນັ້ນໃສ່ທີ່ດິນ.

ການວິເຄາະດັ່ງກ່າວນີ້ບໍ່ໄດ້ລວມເອົາການສຳປະທານຂຸດຄົ້ນໄມ້, ສັນຍາຜູກພັນສອງສິ້ນ ແລະ ໂຄງການໄຟຟ້ານ້ຳຕົກ. ສ່ວນການສຳປະທານສຳຫຼວດບໍ່ແຮ່ພຽງແຕ່ວິເຄາະແບບຫຍາບໆແຍກອອກຈາກປະເພດການລົງທຶນທີ່ດິນປະເພດອື່ນ.

ດັ່ງນັ້ນ, ການວິເຄາະສຸມໃສ່ທີ່ 2,642 ສັນຍາທີ່ດິນ, ເຊິ່ງລວມກັນທັງຫມົດ 1.1ລ້ານ ຮ.ຕ. ຫຼືປະມານຫ້າເປີເຊັນຂອງດິນແດນຂອງສ.ປ.ປ. ລາວ. ເນື່ອງຈາກການບໍ່ໄດ້ວິເຄາະຄົບຖ້ວນ ແລະ ຂໍ້ຈຳກັດອື່ນໆທີ່ໄດ້ກ່າວໃນພາກທີ1, ເນື້ອທີ່ 1.1 ລ້ານ ຮ.ຕ. ສາມາດເວົ້າວ່າເປັນຕົວເລກຕ່ຳໆໄວ້.

ເພື່ອໃຫ້ເຂົ້າໃຈງ່າຍ, ການປູກເຂົ້າຖືເປັນພືດຫຼັກໃນປະເທດ, ເນື້ອທີ່ປູກເຂົ້າທັງໝົດຍັງມີພຽງແຕ່ 0,97 ຮ.ຕ. ເທົ່ານັ້ນ (MAF, 2012). ເປັນຕາຢ້ານໄປກວ່ານັ້ນ, ຂອບເຂດການລົງທຶນທີ່ອະນຸຍາດຂ້ອນຂ້າງມຸ່ງໄປໃສ່ທາງດິນປ່າໄມ້ ແລະ ເຂົ້າເຖິງໄດ້ງ່າຍ.

ສ່ວນໃຫຍ່ຂອງໂຄງການ (62%) ມີຂະໜາດນ້ອຍກວ່າ 5 ຮ.ຕ. ແລະໂຄງການໃຫ້ເຊົ່າມີທ່າອ່ຽງນ້ອຍກວ່າໂຄງການສຳປະທານຫຼາຍ. ໃນຂະນະທີ່ 213 ໂຄງການສຳປະທານແມ່ນ ຂະໜາດໃຫຍ່ ກວ່າ 500 ຮ.ຕ. ສ່ວນໃຫຍ່ຂອງໂຄງການໃຫ້ເຊົ່າຊ້ຳພັດນ້ອຍກ່ວາ 5 ຮ.ຕ. ເພາະສະນັ້ນ, ການສຳປະທານຂະໜາດໃຫຍ່ຈຳນວນໜ້ອຍໜຶ່ງພັດກວມເອົາເນື້ອທີ່ອະນຸມັດທັງໝົດໄປໃນອັດຕາສ່ວນຫຼາຍ: 135 ໂຄງການ ທີ່ໃຫຍ່ທີ່ສຸດ (ປະມານ 5% ຂອງໂຄງການທັງຫມົດ) ກວມເອົາ 89% ຂອງເນື້ອທີ່ ລົງທຶນທັງໝົດ. ທີ່ດິນຫຼາຍທີ່ສຸດ, ໂດຍສະເພາະສຳລັບໂຄງການຂະໜາດຫຼາຍກວ່າ 1,000 ຮຕ, ແມ່ນນຳໃຊ້ສຳລັບກິດຈະກຳຂະແໜງການຕົ້ນຕໍລວມທັງປ່າໄມ້ (ສ່ວນໃຫຍ່ປະກອບດ້ວຍການປູກຕົ້ນໄມ້ປະເພດດ່ຽວ ແຕ່ບໍ່ລວມເອົາການສຳປະທານຂຸດຄົ້ນໄມ້) ໂຄງການກະສິກຳ, ແລະ ໂຄງການຂຸດຄົ້ນບໍ່ແຮ່. ຂະແໜງການທີສອງ ແລະ ທີສາມມີພຽງ 3% ແລະ 7%

ຂອງເນື້ອທີ່ລົງທຶນທັງໝົດ ຕາມລຳດັບ. ບໍ່ແຮ່ແມ່ນຂະແໜງການຍ່ອຍທີ່ສຳຄັນທີ່ສຸດໃນດ້ານຈຳນວນໂຄງການ ແລະ ພື້ນທີ່ພາຍໃຕ້ການລົງທຶນ (21% ແລະ 50% ຕາມລຳດັບ); ໂຄງການບໍ່ແຮ່ຍັງແມ່ນໃຫຍ່ທີ່ສຸດໂດຍສະເລ່ຍ, ຢູ່ທີ່ 1.155 ເຮັກຕາ. ການກະສິກຳ ແລະ ປ່າໄມ້ ທັງສອງມີ 14% ຂອງຈຳນວນໂຄງການທັງໝົດ, ເຖິງວ່າໂຄງການປ່າໄມ້ມີ ຄ່າສະເລ່ຍເກືອບສອງເທົ່າຂອງຂະໜາດ ໂຄງການກະສິກຳ (885 ຮຕ ແລະ 453 ເຮັກຕາ ໂດຍສະເລ່ຍຕາມລຳດັບ).

ນັກລົງທຶນພາຍໃນມີຈຳນວນ ໂຄງການຫຼາຍ (1,705 ຫຼື ປະມານ 65% ຂອງຈຳນວນໂຄງການ ທັງໝົດ), ແຕ່ວ່າບັນດາໂຄງການພາຍໃນໂດຍສະເລ່ຍ ເກືອບສິບເທື່ອ ນ້ອຍກວ່າໂຄງການລົງທຶນ ຕ່າງປະເທດເກືອບສິບເທົ່າ. ປະເທດຈີນ, ປະເທດໄທ ແລະ ຫວຽດນາມແມ່ນນັກລົງທຶນຕ່າງປະເທດ ທີ່ໃຫຍ່ທີ່ສຸດ, ທັງຢູ່ໃນແງ່ຂອງຈຳນວນໂຄງການ ແລະ ເນື້ອທີ່ (617 ສັນຍາ ຫຼື 23% ຂອງສັນຍາທັງຫມົດ, ແລະ 579.821 ເຮັກຕາ ຫຼື 53% ຂອງທີ່ດິນທັງຫມົດພາຍໃຕ້ການລົງທຶນ). ນັກລົງທຶນຈີນມີຈຳນວນ ໂຄງການການລົງທຶນຫຼາຍທີ່ສຸດຂອງຕ່າງປະເທດ (299), ແຕ່ມັນມີທ່າອ່ຽງທີ່ ຈະມີນ້ອຍກວ່າໃນດ້ານຂະໜາດຂອງໂຄງການ ການລົງທຶນຂອງຫວຽດນາມ ເລັກໜ້ອຍ, ດັ່ງນັ້ນ ເນື້ອທີ່ທັງຫມົດພາຍໃຕ້ການລົງທຶນຂອງຈີນແມ່ນຕ່ຳກວ່າການລົງທຶນຫວຽດນາມ (199,015 ຮຕ ແລະ 307.169 ເຮັກຕາ ຕາມລຳດັບ). ໂຄງການລົງທຶນຮ່ວມແມ່ນມີຂະໜາດສະເລ່ຍໃກ້ຄຽງກັນກັບບັນດາ ໂຄງການລົງທຶນຕ່າງປະເທດ (1,048 ຮ.ຕ.); ເຖິງແມ່ນວ່າຈະມີ ຈຳນວນ ໂຄງການຮ່ວມມື (140 ສັນຍາ), ມັນກໍຍັງຄົງມີເນື້ອທີ່ຮອດ 123.673 ຮ.ຕ. ຂອງເນື້ອທີ່ທັງຫມົດທີ່ຢູ່ພາຍໃຕ້ການລົງທຶນ. ເຖິງວ່າ ການລົງທຶນເກີດຂຶ້ນຢ່າງຫຼວງຫຼາຍໃນທົ່ວ ສປປ ລາວ, ແຕ່ເນື້ອທີ່ພາຍໃຕ້ການລົງທຶນທັງໝົດ ໃຫຍ່ທີ່ສຸດໃນເຂດພາກເໜືອໃນຂະນະທີ່ທາງພາກກາງຂອງ ສປປ ລາວ ມີຈຳນວນສັນຍາທີ່ສຸດ.

ຜົນຜະຫຼິດທີ່ປູກຫຼືຜະຫຼິດຕະພັນທີ່ຂຸດຄົ້ນຈາກດິນເຊິ່ງອະນຸຍາດລົງທຶນນັ້ນ ມີລັກສະນະເຊື່ອມໂຍງກັບເງື່ອນໄຂທາງດ້ານກາຍະພາບ, ຄວາມຕ້ອງການຂອງຕະຫຼາດສົ່ງອອກ ແລະ ຕົວຂັບເຄື່ອນດ້ານນະໂຍບາຍ. ນ້ຳຕານ ແລະ ໝາກເຍົາ ເຊິ່ງນັກລົງທຶນໄທ ແລະ ເກົາຫຼີເປັນຫຼັກ ມີເນື້ອທີ່ກວ້າງຂວາງ (34,969 ຮ.ຕ. ແລະ 25,179 ຮ.ຕ. ຕາມລຳດັບ) ຖ້າສົມທຽບໃສ່ຜົນຜະຫຼິດກະສິກຳປະເພດອື່ນໆ ແລະ ສ່ວນໃຫຍ່ກວມເອົາເຂດພາກກາງ ແລະ ພາກໃຕ້ບ່ອນທີ່ດິນພຽງ, ດິນກະສິກຳຍັງຄົງມີປະສິດຕິຜົນເຫຼືອຢູ່. 66% ຂອງສວນປູກໄມ້ຕັ້ງຢູ່ເຂດພາກໃຕ້ສ່ວນຫຼາຍພາຍໃຕ້ການລົງທຶນຂອງຫວຽດນາມ. ຢາງເປັນຕົ້ນໄມ້ທີ່ປູກຄອບຄຸມຢູ່ມາກມາຍບໍ່ໄດ້ກ່ຽວກັບວ່າຢູ່ພາກໃດ ຫຼື ນັກລົງທຶນປະເທດໃດ (ມີ 225 ໂຄງການປົກຄຸມ 129,614 ຮ.ຕ.). ຕົວເລກນີ້ກໍ່ປະເມີນແບບຕ່ຳໆເນື້ອທີ່ປູກຝັງ, ເພາະເຫັນວ່າຍັງມີການປູກຢາງແບບພັນທະສັນຍາສອງສົ້ນ, ປົກະຕິຢູ່ພາກເໜືອ ໃນທາງກົດໝາຍບໍ່ຖືວ່າເປັນການສຳປະທານ ຫຼື ເຊົ່າ (ສະນັ້ນກໍ່ເລີຍບໍ່ໄດ້ລວມຢູ່ໃນຕົວເລກນີ້).ເຖິງແມ່ນວ່າ ໃນຕົວຈິງມີການສຶກສາຈຳນວນຫຼາຍບົ່ງຊີ້ວ່າ ສັນຍາຜູກພັນສອງສົ້ນຄ້າຍຄືກັບສຳປະທານ ໃນພາກປະຕິບັດສຳລັບສັນຍາການຊົດເຊີຍແລະສັນຍາແຮງງານ (Shi 2008, Dwyer ຈະຈັດພິມໃນມໍ່ໆນີ້)

ໂຄງການຂຸດຄົ້ນບໍ່ແຮ່ສ່ວນຫຼາຍມີຢູ່ພາກເໜືອ ແລະ ພາກກາງ, ມີພຽງແຕ່ 6%ຂອງເນື້ອທີ່ໂຄງການລົງທຶນບໍ່ແຮ່ທີ່ຕັ້ງຢູ່ພາກໃຕ້. ໂຄງການສຳຫຼວດບໍ່ແຮ່ກວມເນື້ອທີ່ດິນຢ່າງໄພສານ (1,026,873 ຮ.ຕ.) ເກືອບເທົ່າກັບທັງໝົດເນື້ອທີ່ສຳປະທານ ແລະ ເຊົ່າທີ່ດິນເພື່ອກິດຈະກຳປະເພດອື່ນລວມກັນ.

## ການວິເຄາະລັກສະນະພູມສາດ ແລະ ເນື້ອໃນ

ເພື່ອສ້າງຄວາມເຂົ້າໃຈເລິກເຊິ່ງດ້ານເນື້ອໃນດ້ານຊີວະກາຍະພາບ ແລະ ເສດຖະກິດ-ສັງຄົມໃນການອະນຸຍາດໂຄງການສຳປະທານ ແລະ ເຊົ່າທີ່ດິນ, ປຶ້ມຫົວນີ້ວິເຄາະຂໍ້ມູນທີ່ຂຶ້ນບັນຊີສົມທົບກັບຂໍ້ມູນມືສອງອື່ນໆ. ເຖິງແມ່ນວ່າມີພຽງ 1,258ໂຄງການ (53%ຂອງໂຄງການທັງໝົດ) ມີຂໍ້ມູນໃນລັກສະນະພູມສາດອ້າງອີງ ແລະ ກໍ່ໄດ້ວິເຄາະໃນສ່ວນນີ້, ຜົນໄດ້ຮັບຈາກການວິເຄາະໄດ້ປະກອບສ່ວນຢ່າງສຳຄັນຕໍ່ການອະພິປາຍໃນກອບກວ້າງໆກ່ຽວກັບການສຳປະທານ ແລະ ການເຊົ່າທີ່ດິນ.

ບໍ່ແມ່ນເລື່ອງແປກ, ເນື້ອທີ່ພາຍໃຕ້ການລົງທຶນຢູ່ໃນເຂດທົ່ງພຽງຂອງ ສ.ປ.ປ.ລາວ (ຕ່ຳກວ່າລະດັບ 500ແມັດເໜືອນ້ຳທະເລ). ເນື້ອທີ່ພາຍໃຕ້ການລົງທຶນຂ້ອນຂ້າງເຂົ້າເຖິງໄດ້ງ່າຍໂດຍທຽບຖານ, ສ່ວນຫຼາຍບໍ່ເກີນໜຶ່ງຊົ່ວໂມງເດີນທາງຫາເທດສະບານເມືອງໃກ້ຄຽງ. ໂຄງການຂະແໜງການຕົ້ນຕໍຢູ່ໃນເຂດຫ່າງໄກສອກຫຼີກທີ່ສຸດສົມທຽບໃສ່ທຸກຂະແໜງ, ໂຄງການບໍ່ແຮ່ໂດຍສະເລ່ຍໄກຈາກເທດສະບານເມືອງທີ່ສຸດ (58% ຂອງໂຄງການໃຊ້ເວລາເດີນທາງຫຼາຍກວ່າ 2 ຊົ່ວໂມງຫາເທດສະບານເມືອງທີ່ໃກ້ສຸດ). ເນື້ອທີ່ພາຍໃຕ້ການລົງທຶນຕ່າງປະເທດກໍ່ເຂົ້າເຖິງຍາກກວ່າຄ່າສະເລ່ຍ, ໂດຍສະເພາະເມື່ອສົມທຽບກັບການລົງທຶນພາຍໃນ- ທ່າອ່ຽງນີ້ເບິ່ງແລ້ວເປັນຍ້ອນເນື້ອທີ່ໂຄງການໂດຍສະເລ່ຍມີຂະໜາດໃຫຍ່ ແລະ ໜັກໄປທາງກິດຈະກຳຂະແໜງການຕົ້ນຕໍຂອງນັກລົງທຶນຕ່າງປະເທດ.

ສັງລວມແລ້ວ, ການວິເຄາະລັກສະນະພູມສາດກວມເອົາປະມານ 1900ບ້ານທີ່ມີທີ່ດິນຢູ່ພາຍໃຕ້ການສຳປະທານ ແລະ ເຊົ່າ-ອີກອັນໜຶ່ງ, ຕົວເລກນີ້ຕີຕ່ຳໆໄວ້ເພາະພິຈາລະນາຈາກຈຳນວນທີ່ດິນຈຳກັດໃນເຂດທີ່ມີຂໍ້ມູນອ້າງອີງທາງພູມສາດ. ເນື້ອທີ່ບ່ອນທີ່ໂຄງການລົງທຶນຕັ້ງຢູ່ມີເກນຄວາມທຸກຍາກສະເລ່ຍ 27% (ເກນຄວາມທຸກຍາກຄິດໄລ່ຕາມວິທີທີ່ ແອບເປູ ແລະ ຄະນະ (2008) ກຳນົດ). ຕົວເລກນີ້ຕ່ຳກວ່າຕົວ

ເລກທີ່ປະເມີນບ້ານທຸກຍາກໃນທົ່ວປະເທດທີ່ປະເມີນເກນຄວາມທຸກຍາກໄດ້ໃນລະດັບ 34.7% (ແອບເປູ,2008). ເຊັ່ນດຽວກັນນີ້, ອັດຕາການຮູ້ໜັງສືໃນພື້ນທີ່ພາຍໃຕ້ການລົງທຶນແມ່ນ 80%, ເຈັດເປີເຊັນສູງກວ່າອັດຕາການຮູ້ໜັງສືທົ່ວປະເທດເຊິ່ງມີ 73%. ຄຳຖາມຄົ້ນຄວ້າສຳຄັນໃນຕໍ່ໜ້າແມ່ນວ່າ ຜົນກະທົບຂອງໂຄງການລົງທຶນຈະໃຫ້ຜົນແຕກຕ່າງກັນຫຼືບໍ່ລະຫວ່າງເຂດໄກ ແລະ ເຂດທີ່ເຂົ້າເຖິງໄດ້ງ່າຍກວ່າ.

ການລົງທຶນຂອງຕ່າງປະເທດ, ພິເສດຫວຽດນາມ, ຈີນ ແລະ ໄທ ມີຢູ່ໃນເຂດມັ່ງຄັ່ງໜ້ອຍກວ່າໂຄງການລົງທຶນພາຍໃນ ແລະ ຮ່ວມທຶນເລັກໜ້ອຍ, ເຖິງວ່າທັງໝົດຈະຢູ່ໃນເກນທຸກຍາກຕ່ຳກວ່າຄ່າສະເລ່ຍລະດັບຊາດ. ພື້ນທີ່ໂຄງການຂະແໜງການຕົ້ນຕໍ ສົມທຽບກັບໂຄງການລົງທຶນທັງໝົດ, ແມ່ນທຸກທີ່ສຸດ ແລະ ຮູ້ໜັງສືໜ້ອຍທີ່ສຸດ ໂດຍຂະແໜງການຍ່ອຍປ່າໄມ້ເປັນເຂດທີ່ທຸກທີ່ສຸດສົມທຽບກັບຂະແໜງການຍ່ອຍອື່ນໆ. ຄອບຄົວຊົນເຜົ່າທີ່ເວົ້າພາສາລາວ-ໄຕ ກວມສ່ວນໃຫຍ່ໃນເຂດລົງທຶນ (72%ຂອງປະຊາກອນໃນພື້ນທີ່ພາຍໃຕ້ການລົງທຶນແມ່ນລາວ-ໄຕ ຂະນະທີ່ທົ່ວປະເທດມີ 14%). ປະຊາກອນໃນເຂດໂຄງການລົງທຶນຂະແໜງການຕົ້ນຕໍຂ້ອນຂ້າງຢູ່ຫ່າງໄກສອກຫຼີກ ແລະ ມັ່ງຄັ່ງໜ້ອຍ, ມີອັດຕາສ່ວນຂອງຜູ້ທີ່ບໍ່ແມ່ນລາວ-ໄຕຫຼາຍກວ່າຂະແໜງການອື່ນໃດ.

ລັດຖະບານແຫ່ງ ສ.ປ.ປ.ລາວ ຕັ້ງເປົ້າໝາຍອັນສູງສົ່ງໃຫ້ໄດ້ພື້ນທີ່ປົກຫຸ້ມປ່າໄມ້ 65% ໃນປີ 2015 ແລະ 70%ໃນປີ 2020 (ກກປ, 2005) ກົດໝາຍປ່າໄມ້ (ລບ, 2007) ນິຍາມ ແລະ ກຳນົດເຂດສາມປະເພດປ່າ: ປ່າອະນຸລັກ, ປ່າປ້ອງກັນ, ແລະ ປ່າຜະລິດ.ປະເພດເຫຼົ່ານີ້ບໍ່ໄດ້ບອກການປົກຄຸມໜ້າດິນໃນຂະນະນີ້ ແຕ່ພັດກຳນົດປະເພດການຄຸ້ມຄອງ ແລະ ລະບຽບການນຳໃຊ້ທີ່ດິນ ໂດຍການຊ້ອນທັບຂໍ້ມູນທີ່ຂຶ້ນບັນຊີ ແລະ ຂໍ້ມູນລັກສະນະພູມສາດ (ກກປ/ກປ, 2011) ເກືອບໜຶ່ງສ່ວນສາມຂອງການສຳປະທານ ແລະ ການເຊົ່າທີ່ໄດ້ອະນຸຍາດ ສະແດງໃຫ້ເຫັນວ່າຕົກຢູ່ໃນເຂດແດນທີ່ຈັດປະເພດເປັນປ່າໄມ້.ຂະນະທີ່ປ່າຜະລິດອາດຄາດຫວັງໃຫ້ຮອງຮັບຈຳນວນໂຄງການລົງທຶນໄດ້ຫຼາຍໂດຍພິຈາລະນາຈາກຂໍ້ຈຳກັດກ່ຽວກັບກິດຈະກຳການພັດທະນາໃນເຂດປ່າໄມ້ປ່າສະຫງວນ ແລະ ປ່າປ້ອງກັນ, ຊ້ຳພັດເຫັນວ່າການລົງທຶນຕົກໃນເຂດເປັນປະເພດປ່າປ້ອງກັນ (23%ຂອງເນື້ອທີ່ລົງທຶນທັງໝົດ). ຄວາມແຕກຕ່າງລະຫວ່າງການກຳນົດໃນລະບຽບການ ແລະ ການປະຕິບັດຕົວຈິງເປັນສິ່ງທີ່ໜ້າເປັນຫ່ວງຫຼາຍ, ມີຄວາມຕ້ອງການສຶກສາເລິກເຂົ້າໄປວ່າການຟື້ນຟູປ່າໄມ້ ແລະ ການປ້ອງກັນປ່າໄມ້ຈະໄດ້ຮັບການເອົາໃຈໃສ່ຄືລະບຸໄວ້ໃນນະໂຍບາຍຫຼືບໍ່.

ຂໍ້ມູນການຂຶ້ນບັນຊີປ່າໄມ້ລະດັບຊາດ (ກກປ,2002) ໄດ້ຖືກໃຊ້ເຂົ້າໃນການວິເຄາະການປົກຫຸ້ມໜ້າດິນທີ່ອະນຸຍາດລົງທຶນໃນ ສ.ປ.ປ.ລາວ. ຜົນການວິເຄາະຊີ້ໃຫ້ເຫັນວ່າ ອັດຕາສ່ວນໃຫຍ່ທີ່ສຸດຂອງທີ່ດິນທີ່ໄດ້ອະນຸຍາດລົງທຶນຕົກຢູ່ໃນເຂດປ່າຟື້ນຟູ, ມີ 45%ຂອງເນື້ອທີ່ທັງໝົດທີ່ອະນຸຍາດສຳປະທານຕົກຢູ່ໃນຊັ້ນປົກຫຸ້ມໜ້າດິນປະເພດນີ້, ຕາມມາດ້ວຍ 37% ຢູ່ເທິງດິນປ່າໄມ້. ປ່າຟື້ນຟູລວມເອົາປ່າເຫຼົ່າອ່ອນ, ປ່າເຫຼົ່າແກ່ ແລະ ເນື້ອທີ່ທີ່ຢູ່ໃນລະບົບກະສິກຳໝູນວຽນ. ການກວມເອົາສອງປະເພດປົກຫຸ້ມໜ້າດິນຂອງທີ່ດິນທີ່ອະນຸຍາດລົງທຶນເຫຼົ່ານີ້ກໍ່ໝາຍຄວາມວ່າຈະສົ່ງຜົນກະທົບທີ່ເຫັນໄດ້ຊັດເຈນຕໍ່ການປົກຫຸ້ມໜ້າດິນ-ໂດຍສະເພາະທີ່ເປັນດິນປ່າໄມ້ໃນ ສ.ປ.ປ.ລາວ

## ພາບໃນອະນາຄົດ

ສິ່ງທີ່ຄົ້ນພົບໃນປຶ້ມຫົວນີ້ຕອບສະໜອງບັນດາຈຸດປະສົງທີ່ແຕກຕ່າງກັນໃນການອະພິປາຍກວ້າງໆກ່ຽວກັບການສຳປະທານ ແລະ ການເຊົ່າທີ່ດິນໃນ ສ.ປ.ປ.ລາວ ເລີ່ມຈາກມັນເປັນຂໍ້ມູນພື້ນຖານທີ່ສຳຄັນສຳລັບການສຶກສາຄົ້ນຄວ້າໃນຕໍ່ໜ້າ. ຜົນໄດ້ຮັບເຫຼົ່ານີ້, ສົມທົບກັບ ກໍລະນີສຶກສາທີ່ມີຢູ່ຊີ້ໃຫ້ເຫັນເຖິງຈຳນວນຂອງຈຸດອ່ອນໃນການຄຸ້ມຄອງ ແລະ ບໍລິຫານທີ່ດິນປະຈຸບັນ. ໂດຍສະເພາະ ມັນຊີ້ໃຫ້ເຫັນບັນຫາໃນການປະຕິບັດນະໂຍບາຍການລົງທຶນ, ການປະສານງານຂອງລັດຖະບານ ແລະ ຄວາມໂປ່ງໃສ. ປຶ້ມຫົວນີ້ຍັງສະເໜີໂອກາດສຳລັບການວິເຄາະລົງເລິກ ຫຼື ເສີມຂະຫຍາຍສິ່ງທີ່ຄົ້ນພົບໃນເວລານີ້. ການຄົ້ນຄວ້າໃນຕໍ່ໜ້າແມ່ນມີຄວາມຈຳເປັນເພື່ອເຮັດໃຫ້ໄດ້ຮັບຄວາມເຂົ້າໃຈໃນວົງກວ້າງກ່ຽວກັບປັດໄຈຂັບເຄື່ອນຕົ້ນຕໍ ແລະ ຂະບວນການຕັດສິນໃຈທີ່ຢູ່ເບື້ອງຫຼັງທ່າອ່ຽງໃນການລົງທຶນທີ່ດິນທີ່ໄດ້ຕິດຕາມຢູ່ນີ້.

ຍິ່ງກວ່ານີ້, ປຶ້ມຫົວນີ້ຈະຊ່ວຍປັບປຸງທ່າແຮງໃນການວິເຄາະ ແລະ ນຳສະເໜີພາບ "ເຫັນໄດ້ຊັດ" ຂໍ້ມູນໃນລັກສະນະພູມສາດ, ຖ້າຈະເວົ້າກ່ຽວກັບພູມີທັດຂອງການລົງທຶນທີ່ສຸມໃສ່ຊັບພະຍາກອນຢູ່ໃນ ສ.ປ.ປ.ລາວ ມັນໄດ້ເຮັດລະອຽດລົງເລິກໄປຮອດກໍລະນີສຶກສາສະເພາະ ເພື່ອເຮັດໃຫ້ເຂົ້າໃຈຂອບເຂດຂອງການລົງທຶນທີ່ດິນໃນພາບທີ່ກວ້າງກວ່າເຊິ່ງເປັນຂັ້ນຕອນສຳຄັນເມື່ອພິຈາລະນາການແລ່ນບໍ່ທັນກັນລະຫວ່າງລະບຽບການ ແລະ ຄວາມສາມາດຂອງລັດຖະບານໃນການຕິດຕາມກວດກາ ແລະ ຈັງຫວະຂອງການອະນຸຍາດໃຫ້ລົງທຶນໃນທີ່ດິນ, ນອກຈາກນີ້ຍັງມີຊັ້ນຂໍ້ມູນອື່ນໆຈຳນວນຫຼວງຫຼາຍທີ່ເຊື່ອມໂຍງກັບຂໍ້ມູນທີ່ຂຶ້ນບັນຊີອາດປະກົດຜົນໄດ້ຮັບເພີ່ມເຕີມນອກຈາກທີ່ນຳສະເໜີຢູ່ນີ້. ສຸດທ້າຍ, ນອກເໜືອຈາກຈະສາມາດນຳເອົາໄປເປັນນະໂຍບາຍຈາກຜົນຂອງການສຶກສາຄວາມຈິງທີ່ວ່າຂໍ້ມູນນີ້ໄດ້ຖືກເກັບກຳໃນລະດັບຊາດ, ການວິເຄາະ ແລະ ເຜີຍແຜ່ ໃນຮູບແບບນີ້ສະແດງເຖິງຄວາມສຳເລັດທີ່ສຳຄັນດ້ານ ຄວາມໂປ່ງໃສ. ຜົນຂອງມັນຍັງຊີ້ໃຫ້ເຫັນເຄື່ອງໝາຍໃນການພັດທະນາເຄື່ອງມື ສຳລັບການກຳນົດນະໂຍບາຍທີ່ອີງໃສ່ຂໍ້ມູນຄວາມຈິງກໍ່ຄືຄວາມພະຍາຍາມທີ່ຈະປັບປຸງການເກັບກຳຂໍ້ມູນ, ການຈັດຕັ້ງ ແລະ ການແລກປ່ຽນຂໍ້ມູນໃນ ສ.ປ.ປ.ລາວ ເພາະສະນັ້ນ, ຜູ້ຂຽນປຶ້ມຫົວນີ້ຈຶ່ງຫວັງວ່າການຄົ້ນພົບຈະຊ່ວຍຕີຂອບນິຕິກຳທີ່ກ່ຽວຂ້ອງ ແລະ ປະກອບສ່ວນຕໍ່ການປັບປຸງກົດໝາຍທີ່ດິນ ແລະ ກົດໝາຍປ່າໄມ້ກໍ່ຄືການດຳເນີນການຢ່າງລະອຽດລະອໍ, ຖືເປັນບັນຫາສຳຄັນເໜືອສິ່ງອື່ນໃດ ແລະ ເຮັດໃຫ້ປະສານກົມກຽວກັນແໜ້ນຂອງນະໂຍບາຍຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ.